ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 1277/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 29 ພະຈິກ 2024

# ຂໍ້ຕົກລົງ
# ວ່າດ້ວຍການເຄື່ອນໄຫວທຸລະກິດຂອງທະນາຄານຄຳ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 39/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ການຄົ້ນຄວ້າຂອງກົມຄຸ້ມຄອງທະນາຄານທຸລະກິດ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການດຳເນີນທຸລະກິດຂອງທະນາຄານຄຳ ເພື່ອເປັນບ່ອນອີງໃນການໃຫ້ບໍລິການຜະລິດຕະພັນຂອງທະນາຄານດັ່ງກ່າວ ໃຫ້ມີປະສິດທິພາບ ແລະ ມີຄວາມໂປ່ງໃສ ແນໃສ່ຮັບປະກັນໃຫ້ທະນາຄານຄຳ ມີຄວາມເຕີບໃຫຍ່, ເຂັ້ມແຂງ, ທັນສະໄໝ, ປອດໄພ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບຂອງລະບົບສະຖາບັນການເງິນ-ເງິນຕາ ແລະ ການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 2 ທຸລະກິດຂອງທະນາຄານຄຳ

ທຸລະກິດຂອງທະນາຄານຄຳ ແມ່ນທຸລະກິດທີ່ທະນາຄານແຫ່ງ ສປປ ລາວ ອະນຸຍາດໃຫ້ທະນາຄານຄຳ ສາມາດດຳເນີນທຸລະກິດຄຳ ດ້ວຍການໃຫ້ບໍລິການ ເຊັ່ນ: ການຮັບຝາກຄຳ, ການໃຫ້ກູ້ຢືມຄຳ, ການຊື້ ຂາຍ ຄຳ, ການໃຫ້ບໍລິການຮັບຝາກເງິນບັນຊີກະແສລາຍວັນ, ການນຳເຂົ້າ ສົ່ງອອກ ຄຳ, ການຢັ້ງຢືນຄຸນນະພາບຄຳ, ການກັ່ນຫຼອມຄຳ, ການໃຫ້ບໍລິການເກັບຮັກສາວັດຖຸມີຄ່າ;

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບຕ່າງໆທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ທະນາຄານຄຳ** (Bullion Bank) ໝາຍເຖິງ ທະນາຄານທຸລະກິດສະເພາະ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວ ພາຍໃຕ້ກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 39/ສພຊ, ລົງວັນທີ 17 ກໍລະກົດ 2023 ແລະ ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດ ຕາມຂໍ້ຕົກລົງສະບັບນີ້ ແລະ ລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດອອກ;

2. **ຄຳ** ໝາຍເຖິງ ຄຳແທ່ງ ແລະ ຫຼຽນຄຳ;

3. **ຄຳແທ່ງ** ໝາຍເຖິງ ຄຳແທ່ງທີ່ມີລັກສະນະສີ່ຫຼ່ຽມ ທີ່ສາມາດໃຊ້ເປັນເຄື່ອງມືຊຳລະລະຫວ່າງປະເທດ ຫຼື ຄຳແທ່ງທີ່ໄດ້ມາດຕະຖານຄຳລາວ ຫຼື ຄຳແທ່ງບໍ່ໄດ້ຜ່ານການຢັ້ງຢືນມາດຕະຖານ;

4. **ຫຼຽນຄຳ** ໝາຍເຖິງ ຄຳທີ່ມີລັກສະນະເປັນຫຼຽນວົງມົນ ໂດຍມີສັນຍາລັກ ຫຼື ເຄື່ອງໝາຍ ສະເພາະ;

5. **ຄຳຮຸບປະພັນ** ໝາຍເຖິງ ຄຳທີ່ນຳມາຜະລິດສຳເລັດຮູບ ໃຫ້ເປັນຮູບຊົງ ຫຼື ລັກສະນະຕ່າງໆ ເປັນຕົ້ນ: ສາຍຄໍ, ສາຍແຂນ, ແຫວນ, ຕ່າງຫູ;

6. **ແຮ່ທາດ** ໝາຍເຖິງ ແຮ່ທາດ ທີ່ສາມາດປຸງແຕ່ງໃຫ້ເປັນຜະລິດຕະພັນຄຳສຳເລັດຮູບ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບທະນາຄານຄຳ ທີ່ສ້າງຕັ້ງ ແລະ ດຳເນີນທຸລະກິດ ຢູ່ ສປປ ລາວ, ລວມທັງ ຜູ້ບໍລິຫານ ແລະ ພະນັກງານ ຂອງທະນາຄານດັ່ງກ່າວ.

## ໝວດທີ 2
## ທຸລະກິດຂອງທະນາຄານຄຳ

**ມາດຕາ 5 ທຸລະກິດຂອງທະນາຄານຄຳ**

ທຸລະກິດຂອງທະນາຄານຄຳ ປະກອບດ້ວຍ:

1. ການຮັບຝາກຄຳ;
2. ການໃຫ້ກູ້ຢືມຄຳ;
3. ການໃຫ້ບໍລິການຊື້ ຂາຍ ຄຳ;
4. ການຮັບຝາກເງິນບັນຊີກະແສລາຍວັນ;
5. ການນຳເຂົ້າ ສົ່ງອອກ ຄຳ;
6. ການຢັ້ງຢືນຄຸນນະພາບຄຳ;
7. ການກັ່ນຫຼອມຄຳ;
8. ການໃຫ້ບໍລິການເກັບຮັກສາວັດຖຸມີຄ່າ;
9. ການໃຫ້ບໍລິການອື່ນ ຕາມການອະນຸຍາດຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 6 ການຮັບຝາກຄຳ**

ການຮັບຝາກຄຳ ແມ່ນການໃຫ້ບໍລິການເປີດບັນຊີຝາກຄຳຂອງທະນາຄານຄຳ ໃຫ້ແກ່ລູກຄ້າທີ່ເປັນບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຊຶ່ງປະກອບດ້ວຍ ບັນຊີຝາກປະຢັດຄຳ (Gold Savings Deposits), ບັນຊີຝາກຄຳມີກຳນົດ (Gold Fixed Deposits) ແລະ ອື່ນໆ ໂດຍມີດອກເບ້ຍ ຫຼື ບໍ່ມີດອກເບ້ຍ.

ໃນການຮັບຝາກຄຳ ແມ່ນສາມາດຮັບຝາກເປັນຄຳຈາກລູກຄ້າທີ່ມີຄຳຢູ່ແລ້ວ ນຳມາຝາກໄວ້ນຳທະນາຄານຄຳ ຫຼື ລູກຄ້າຊື້ຄຳນຳທະນາຄານເອງ ໂດຍຊຳລະເປັນເງິນສົດ ຫຼື ຊຳລະຜ່ານທາງບັນຊີເງິນຝາກກະແສລາຍວັນທີ່ລູກຄ້າເປີດໄວ້ກັບທະນາຄານຄຳ ຫຼື ຜ່ານບັນຊີ ຫຼື ບັດຂອງທະນາຄານອື່ນ ແລ້ວຝາກຄຳໄວ້ນຳທະນາຄານ. ບັນຊີຝາກຄຳດັ່ງກ່າວ ສາມາດຖອນເປັນຄຳ ຫຼື ເງິນສົດ ໄດ້.

ມູນຄ່າຄຳໃນການຝາກແມ່ນ ຖືກກຳນົດໂດຍ ລາຄາຕະຫຼາດຄຳສາກົນ ຊຶ່ງຖືກແລກປ່ຽນຈາກ ສະກຸນເງິນໂດລາສະຫະລັດ ມາເປັນ ສະກຸນເງິນກີບ.

**ມາດຕາ 7 ການໃຫ້ກູ້ຢືມຄຳ**

ການໃຫ້ກູ້ຢືມຄຳ ແມ່ນການໃຫ້ບໍລິການດ້ວຍການໃຫ້ກູ້ຢືມໃນຮູບແບບຄຳ ຫຼື ເງິນສົດ ໃຫ້ແກ່ລູກຄ້າ ທີ່ຖືກຄ້ຳປະກັນດ້ວຍຄຳ ແລະ ແຮ່ທາດ.

ການໃຫ້ກູ້ຢືມຄຳຂອງທະນາຄານຄຳ ຕ້ອງປະຕິບັດຕາມຂໍ້ຕົກລົງວ່າດ້ວຍຂອບເຂດການສະໜອງສິນເຊື່ອຂອງທະນາຄານທຸລະກິດ ສະບັບເລກທີ 296/ທຫລ, ລົງວັນທີ 17 ມິຖຸນາ 2021 ຫຼື ສະບັບທີ່ມີການປັບປຸງ ແຕ່ລະໄລຍະ.

ການໃຫ້ກູ້ຢືມຄຳແຕ່ລະຄັ້ງ ທະນາຄານຄຳ ຕ້ອງກວດຂໍ້ມູນຂ່າວສານສິນເຊື່ອຂອງລູກຄ້າ ຈາກລະບົບຂໍ້ມູນຂ່າວສານສິນເຊື່ອ ທີ່ໄດ້ຮັບຮອງໂດຍທະນາຄານແຫ່ງ ສປປ ລາວ.

**ມາດຕາ 8 ການຊື້ ຂາຍ ຄຳ**

ການຊື້ ຂາຍ ຄຳ ແມ່ນການໃຫ້ບໍລິການຂອງທະນາຄານຄຳ ເພື່ອຊື້ ຂາຍ ຄຳແທ່ງ ຫຼື ຫຼຽນຄຳ ກັບ ລູກຄ້າຜ່ານປ່ອງບໍລິການ ແລະ ຕູ້ຈຳໜ່າຍຄຳແບບອັດຕະໂນມັດ ຂອງທະນາຄານຄຳ ຫຼື ຜ່ານຊ່ອງທາງອື່ນຕາມການອະນຸຍາດຂອງທະນາຄານແຫ່ງ ສປປ ລາວ.

ການຊື້ ຂາຍ ຄຳ ສາມາດຊຳລະເປັນເງິນສົດ ຫຼື ຊຳລະຜ່ານທາງບັນຊີເງິນຝາກກະແສລາຍວັນທີ່ລູກຄ້າເປີດໄວ້ກັບທະນາຄານຄຳ ຫຼື ຜ່ານບັນຊີ ຫຼື ບັດຂອງທະນາຄານອື່ນ.

**ມາດຕາ 9 ການຮັບຝາກເງິນບັນຊີກະແສລາຍວັນ**

ການຮັບຝາກເງິນບັນຊີກະແສລາຍວັນ ແມ່ນການໃຫ້ບໍລິການເປີດບັນຊີເງິນຝາກກະແສລາຍວັນສະກຸນກີບໃຫ້ແກ່ລູກຄ້າ ເພື່ອນຳໃຊ້ຊຳລະສະສາງທຸລະກຳຊື້ ຂາຍ ຄຳ ກັບທະນາຄານຄຳ ເທົ່ານັ້ນ. ກໍລະນີລູກຄ້າເປັນຜູ້ບໍ່ມີພູມລຳເນົາ ຢູ່ ສປປ ລາວ ທະນາຄານຄຳ ສາມາດເປີດບັນຊີເງິນຝາກກະແສລາຍວັນ ເປັນສະກຸນເງິນຕາຕ່າງປະເທດ ເພື່ອຮອງຮັບທຸລະກຳການຊື້ ຂາຍ ຄຳ ໂດຍປະຕິບັດສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດ.

**ມາດຕາ 10 ການນຳເຂົ້າ ແລະ ສົ່ງອອກ ຄຳ**

ການນຳເຂົ້າ ແລະ ສົ່ງອອກ ຄຳ ແມ່ນການດຳເນີນທຸລະກິດນຳເຂົ້າ ສົ່ງອອກ ຄຳ ທີ່ສາກົນນຳໃຊ້ເປັນເຄື່ອງມືຊຳລະສະສາງລະຫວ່າງປະເທດ.

ການນຳເຂົ້າ ແລະ ສົ່ງອອກ ຄຳ ຕ້ອງປະຕິບັດໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດ ຫຼື ຕາມການອະນຸຍາດຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 11 ການຢັ້ງຢືນຄຸນນະພາບຂອງຄຳ**

ການຢັ້ງຢືນຄຸນນະພາບຂອງຄຳ ແມ່ນການອອກໃບຢັ້ງຢືນຄຸນນະພາບຂອງຄຳ ເພື່ອຮັບປະກັນຄວາມບໍລິສຸດ ແລະ ຄວາມຈິງຂອງຄຳ. ໃບຢັ້ງຢືນດັ່ງກ່າວ ສາມາດໃຊ້ເປັນຫຼັກຖານໃຫ້ແກ່ບຸກຄົນ, ນິຕິບຸກຄົນ ທີ່ໄດ້ລະບຸຊື່ ແມ່ນເປັນເຈົ້າຂອງຄຳ ຕາມທີ່ສະແດງໃນໃບຢັ້ງຢືນດັ່ງກ່າວ.

ໃບຢັ້ງຢືນຄຸນນະພາບຂອງຄຳ ປະກອບດ້ວຍຂໍ້ມູນຕົ້ນຕໍ ດັ່ງນີ້:

1. ແຫຼ່ງກຳເນີດ (ຖ້າມີ);
2. ຊື່ຂອງຜູ້ເປັນເຈົ້າຂອງຄຳ;
3. ຜູ້ແຍກ ແລະ ຜູ້ທົດສອບແຮ່ທາດ;
4. ຄວາມບໍລິສຸດຂອງຄຳ;
5. ນ້ຳໜັກ;
6. ປີຜະລິດ (ຖ້າມີ).

ຜູ້ຖືຄອງໃບຢັ້ງຢືນດັ່ງກ່າວ ສາມາດແລກປ່ຽນ ເປັນຄຳ ຫຼື ເງິນສົດ ໂດຍມີມູນຄ່າທຽບເທົ່າກັບລາຄາຄຳ ແລະ ສາມາດນຳໃຊ້ໃບຢັ້ງຢືນດັ່ງກ່າວ ເປັນຫຼັກຊັບຄ້ຳປະກັນການກູ້ຢືມເງິນນຳທະນາຄານທຸລະກິດ ແລະ ສະຖາບັນການເງິນ.

ການຢັ້ງຢືນຄຸນນະພາບຂອງຄຳ ບໍ່ແມ່ນການກຳນົດມາດຕະຖານຂອງຄຳ ແຕ່ເປັນພຽງການນຳໃຊ້ເຕັກໂນໂລຊີ ເພື່ອກວດຄຸນນະພາບຂອງຄຳ ແລະ ຢັ້ງຢືນຕາມຜົນຂອງເຄື່ອງກວດຄຳ ຫຼື ເຄື່ອງວັດແທກລະດັບຄວາມເຂັ້ມຂຸ້ນທາດຄຳ ເທົ່ານັ້ນ. ສ່ວນມາດຕະຖານຄຳລາວ ແມ່ນສິດ ແລະ ໜ້າທີ່ຂອງຂະແໜງການທີ່ກ່ຽວຂ້ອງ ເປັນຜູ້ກຳນົດ.

**ມາດຕາ 12 ການກັ່ນຫຼອມຄຳ**

ການກັ່ນຫຼອມຄຳ ແມ່ນການນຳໃຊ້ເຄື່ອງມື ແລະ ເຕັກນິກທີ່ທັນສະໄໝ ເພື່ອກັ່ນຫຼອມຄຳ ລວມທັງ ຄຳຮູບປະພັນ ທີ່ມີຄຸນນະພາບ ຫຼື ຄວາມບໍລິສຸດຂອງຄຳຍັງບໍ່ສູງ ໃຫ້ກາຍເປັນຄຳທີ່ມີຄຸນນະພາບ ຫຼື ຄວາມບໍລິສຸດສູງຂຶ້ນກວ່າເກົ່າ.

ທະນາຄານ ສາມາດສ້າງຫ້ອງກັ່ນຫຼອມຄຳ ຢູ່ພາຍໃນອາຄານສຳນັກງານຂອງທະນາຄານເອງ ເພື່ອກັ່ນຫຼອມຄຳຂອງທະນາຄານເອງ ຫຼື ໃຫ້ບໍລິການກັ່ນຫຼອມຄຳໃຫ້ແກ່ລູກຄ້າຂອງທະນາຄານ.

ໃນການສ້າງຫ້ອງກັ່ນຫຼອມຄຳນັ້ນ ຕ້ອງຮັບປະກັນບໍ່ໃຫ້ມີຜົນກະທົບດ້ານລົບຕໍ່ສິ່ງແວດລ້ອມ ແລະ ຊຸມຊົນ ແລະ ຕ້ອງໄດ້ຮັບອະນຸຍາດຈາກການຈັດຕັ້ງລັດທີ່ກ່ຽວຂ້ອງເສຍກ່ອນ.

**ມາດຕາ 13 ການໃຫ້ບໍລິການເກັບຮັກສາວັດຖຸມີຄ່າ**

ການໃຫ້ບໍລິການເກັບຮັກສາວັດຖຸມີຄ່າ ແມ່ນການໃຫ້ບໍລິການໃຫ້ເຊົ່າຕູ້ນິລະໄພເກັບຮັກສາເອກະສານມີຄ່າ ແລະ ວັດຖຸມີຄ່າ ເປັນຕົ້ນ ຄຳແທ່ງ, ຫຼຽນຄຳ, ຄຳຮູບປະພັນ, ເພັດ, ພອຍ ຢູ່ໃນສະຖານທີ່ທີ່ມີຄວາມປອດໄພຂອງທະນາຄານຄຳ ຕາມກົດໝາຍທີ່ກ່ຽວຂ້ອງກຳນົດ.

ການໃຫ້ບໍລິການເກັບຮັກສາວັດຖຸມີຄ່າ ຕ້ອງປະຕິບັດໃຫ້ສອດຄ່ອງກັບກົດໝາຍ

# ໝວດທີ 3
# ການດຳເນີນທຸລະກິດຂອງທະນາຄານຄຳ

**ມາດຕາ 14 ເງື່ອນໄຂຄວາມພ້ອມໃນການດຳເນີນທຸລະກິດຂອງທະນາຄານຄຳ**

ທະນາຄານຄຳ ທີ່ດຳເນີນທຸລະກິດຕາມທີ່ກຳນົດໄວ້ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ຕ້ອງມີເງື່ອນໄຂຄວາມພ້ອມ ດັ່ງນີ້:

1. ເຂົ້າເປັນສະມາຊິກຂອງສະມາຄົມຕະຫຼາດຄຳທີ່ສາກົນຍອມຮັບ ເປັນຕົ້ນ ສະມາຄົມຕະຫຼາດຄຳແຫ່ງລອນດອນ (London Bullion Market Association: LBMA), ສະມາຄົມຕະຫຼາດຄຳແຫ່ງສິງກະໂປ (Singapore Bullion Market Association: SBMA) ພາຍໃນກຳນົດເວລາ 1 ປີ ພາຍຫຼັງໄດ້ຮັບໃບອະນຸຍາດດຳເນີນທຸລະກິດ. ໃນກໍລະນີ ທີ່ທະນາຄານຄຳ ບໍ່ສາມາດເຂົ້າເປັນສະມາຊິກຂອງສະມາຄົມດັ່ງກ່າວໄດ້ ໂດຍມີເຫດຜົນພຽງພໍ ແມ່ນສາມາດສະເໜີຫາທະນາຄານແຫ່ງ ສປປ ລາວ ເພື່ອພິຈາລະນາຕໍ່ກຳນົດເວລາດັ່ງກ່າວ;
2. ມີລະບົບຮອງຮັບດ້ານເຕັກນິກ ແລະ ຄວາມປອດໄພ ໃນການໃຫ້ບໍລິການຜະລິດຕະພັນ;
3. ມີບຸກຄະລາກອນທີ່ມີຄວາມຮູ້ຄວາມສາມາດ, ຄວາມຊໍານານສະເພາະດ້ານ ແລະ ມີປະສົບການກ່ຽວກັບການເງິນ, ການທະນາຄານ, ການບັນຊີ, ທຸລະກິດຄຳ, ການຄຸ້ມຄອງຄວາມສ່ຽງ ແລະ ດ້ານອື່ນທີ່ກ່ຽວຂ້ອງໃນຈຳນວນທີ່ພຽງພໍ;
4. ມີຄູ່ມືບໍລິຫານຄວາມສ່ຽງຂອງຜະລິດຕະພັນ ແລະ ກົດລະບຽບສຳລັບການນຳໃຊ້ຜະລິດຕະພັນ ຢ່າງຮັດກຸມ, ຮອບຄອບ ແລະ ເປັນລະບົບຄົບຊຸດ;
5. ມີອຸປະກອນ ແລະ ສິ່ງອຳນວຍຄວາມສະດວກໃນການໃຫ້ບໍລິການຢ່າງພຽງພໍ ເປັນຕົ້ນ: ສາງເກັບມ້ຽນຄຳທີ່ໄດ້ມາດຕະຖານສາກົນ, ເຄື່ອງຊັ່ງນ້ຳໜັກຄຳ, ເຄື່ອງກວດຄຸນນະພາບຄຳ;
6. ມີເງື່ອນໄຂອື່ນໆ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ.

ສຳລັບການໃຫ້ບໍລິການຢັ້ງຢືນຄຸນນະພາບຂອງຄຳ ຕາມທີ່ກຳນົດໄວ້ໃນມາດຕາ 11 ຂອງຂໍ້ຕົກລົງສະບັບນີ້ ນອກຈາກປະຕິບັດຕາມວັກທີ 1 ຂອງຂໍ້ຕົກລົງສະບັບນີ້, ທະນາຄານຄຳ ຕ້ອງມີເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ມີໃບຢັ້ງຢືນ ແລະ ຮັບຮອງຈາກພາກສ່ວນທີ່ກ່ຽວຂ້ອງ ໃຫ້ເປັນຜູ້ໃຫ້ບໍລິການຢັ້ງຢືນຄຸນນະພາບຂອງຄຳ;
2. ມີເຄື່ອງມື ຫຼື ອຸປະກອນສະເພາະດ້ານ ເພື່ອທົດສອບ ແລະ ຢັ້ງຢືນແຮ່ທາດ;
3. ຜູ້ເຮັດໜ້າທີ່ໃນການຢັ້ງຢືນຄຸນນະພາບຂອງຄຳ ຕ້ອງມີຄວາມຮູ້, ຄວາມຊໍານານສະເພາະດ້ານ, ມີປະສົບການ ແລະ ມີໃບຢັ້ງຢືນ ຫຼື ໃບຮັບຮອງ ຈາກພາກສ່ວນທີ່ກ່ຽວຂ້ອງ.

ທະນາຄານຄຳ ຕ້ອງປະຕິບັດການຮັກສາອັດຕາສ່ວນເງິນແຮ ຫຼື ຄຳແຮ ຝາກບັງຄັບ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດ ແຕ່ລະໄລຍະ.

**ມາດຕາ 15 ການບໍລິຫານຄວາມສ່ຽງຂອງຜະລິດຕະພັນ**

ທະນາຄານຄຳ ຕ້ອງເປັນເຈົ້າການໃນການບໍລິຫານຄວາມສ່ຽງຂອງຜະລິດຕະພັນຂອງຕົນ ໃຫ້ສອດຄ່ອງກັບຍຸດທະສາດ ແລະ ຄວາມສາມາດໃນການຮັບຄວາມສ່ຽງຂອງຕົນ, ສະພາບຕະຫຼາດ ແລະ ເສດຖະກິດ. ໃນນັ້ນ, ຂະບວນການບໍລິຫານຕ້ອງມີຄວາມຮັດກຸມ ພາຍໃຕ້ການຊີ້ນຳຂອງສະພາບໍລິຫານ ແລະ ຄະນະອຳນວຍການ ເພື່ອສາມາດກຳນົດ, ວັດແທກ, ປະເມີນ, ຕິດຕາມ, ລາຍງານ ແລະ ຄວບຄຸມ ແນໃສ່ຫຼຸດຜ່ອນຄວາມສ່ຽງທີ່ສຳຄັນຢ່າງທັນການ

**ມາດຕາ 16 ຄູ່ມືບໍລິຫານຜະລິດຕະພັນ**

ຄູ່ມືບໍລິຫານຜະລິດຕະພັນ ແມ່ນເອກະສານທີ່ທະນາຄານຄໍາ ນໍາໃຊ້ພາຍໃນ ຊຶ່ງກໍານົດລະບຽບ, ຂັ້ນຕອນ ແລະ ວິທີການຈັດຕັ້ງປະຕິບັດ ການບໍລິຫານຜະລິດຕະພັນໃດໜຶ່ງ. ທະນາຄານຄໍາ ຕ້ອງສ້າງຄູ່ມືບໍລິຫານຜະລິດຕະພັນແຕ່ລະປະເພດ ຫຼື ກຸ່ມຜະລິດຕະພັນທີ່ມີລັກສະນະຄ້າຍຄືກັນ ດັ່ງນີ້:

1. ສອດຄ່ອງກັບຂໍ້ຕົກລົງສະບັບນີ້ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ;
2. ສອດຄ່ອງກັບກົດລະບຽບຂອງທະນາຄານຄໍາ;
3. ສອດຄ່ອງກັບຍຸດທະສາດ ແລະ ຄວາມສາມາດໃນການຮັບຄວາມສ່ຽງຂອງຕົນ, ສະພາບຕະຫຼາດ ແລະ ເສດຖະກິດ;
4. ກໍານົດຂັ້ນຕອນ ແລະ ວິທີການບໍລິຫານຜະລິດຕະພັນຢ່າງຊັດເຈນ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ;
5. ກ້າວສູ່ວິທີປະຕິບັດທີ່ດີຂອງສາກົນ;
6. ໄດ້ຮັບການຮັບຮອງຈາກສະພາບໍລິຫານ ຫຼື ຜູ້ທີ່ມີສິດອໍານາດ ຂອງທະນາຄານຄໍາ.

ພາຍຫຼັງຄູ່ມືບໍລິຫານຜະລິດຕະພັນ ໄດ້ຮັບການຮັບຮອງຈາກສະພາບໍລິຫານ ຫຼື ຜູ້ທີ່ມີສິດອໍານາດຂອງທະນາຄານຄໍາ, ທະນາຄານຄໍາ ຕ້ອງຈັດຕັ້ງປະຕິບັດພາຍໃຕ້ການຊີ້ນໍາຂອງສະພາບໍລິຫານ ແລະ ຄະນະອໍານວຍການ, ມີການທົບທວນກ່ຽວກັບການບໍລິຫານຜະລິດຕະພັນຢ່າງໜ້ອຍປີລະຄັ້ງ ແລະ ປັບປຸງໃຫ້ສອດຄ່ອງກັບຂີດຄວາມສາມາດໃນການຮັບຄວາມສ່ຽງ, ລັກສະນະຄວາມສ່ຽງ ຂອງທະນາຄານຄໍາ, ເງື່ອນໄຂຕະຫຼາດ ແລະ ເສດຖະກິດ ແລະ ດໍາເນີນການເຜີຍແຜ່, ຝຶກອົບຮົມໃຫ້ພະນັກງານທີ່ກ່ຽວຂ້ອງຊາບ ແລະ ເຂົ້າໃຈແຈ້ງເພື່ອຮັບປະກັນປະສິດທິຜົນຂອງການຈັດຕັ້ງປະຕິບັດ.

ໃນກໍລະນີມີການປັບປຸງຄູ່ມືຜະລິດຕະພັນ, ໃຫ້ທະນາຄານຄໍາ ລາຍງານ ແລະ ສະໜອງເອກະສານ ກ່ຽວກັບການປັບປຸງດັ່ງກ່າວ ໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ເພື່ອພິຈາລະນາຮັບຮູ້.

**ມາດຕາ 17 ເນື້ອໃນຂອງຄູ່ມືບໍລິຫານຜະລິດຕະພັນ**

ຄູ່ມືບໍລິຫານຜະລິດຕະພັນ ຕ້ອງກໍານົດເນື້ອໃນຕົ້ນຕໍ ດັ່ງນີ້:

1. ຂອບເຂດການໃຫ້ບໍລິການ, ເງື່ອນໄຂຜູ້ຊົມໃຊ້, ຂັ້ນຕອນຕ່າງໆ ເປັນຕົ້ນ ການປະກອບສໍານວນຄໍາຮ້ອງ, ການຍື່ນ ແລະ ການຮັບຄໍາຮ້ອງຂໍໃຊ້ບໍລິການ, ການຊອກຮູ້ລູກຄ້າ, ວິທີກໍານົດລາຄາທີ່ລວມມີ ການກໍານົດອັດຕາດອກເບ້ຍ ແລະ ຄ່າທໍານຽມ, ການສົ່ງເສີມການຂາຍ, ການບໍລິການຫຼັງການຂາຍ, ການວິເຄາະຄວາມສ່ຽງ, ການອະນຸມັດການໃຫ້ບໍລິການຜະລິດຕະພັນ;
2. ການສະໜອງຂໍ້ມູນແກ່ຜູ້ຊົມໃຊ້, ການໂຈະ ແລະ ການຍົກເລີກການໃຫ້ບໍລິການ, ສິດ ແລະ ພັນທະຂອງຜູ້ຊົມໃຊ້, ຂອບເຂດຄວາມຮັບຜິດຊອບຂອງທະນາຄານຄໍາ, ການແກ້ໄຂຄໍາຮ້ອງທຸກ ແລະ ເນື້ອໃນອື່ນຕາມການກໍານົດຂອງລະບຽບການທີ່ກ່ຽວຂ້ອງ;
3. ຄວາມສາມາດໃນການຮັບຄວາມສ່ຽງ (Risk Appetite), ການກໍານົດຄວາມສ່ຽງຈຸດສຸມ (Concentration Risk) ໃນການໃຫ້ບໍລິການຜະລິດຕະພັນ;
4. ການບໍລິຫານຄວາມສ່ຽງທີ່ສາມາດ ລະບຸ, ວັດແທກ, ປະເມີນຄ່າ, ຕິດຕາມ, ລາຍງານ ແລະ ຄວບຄຸມ ຫຼື ຫຼຸດຜ່ອນຄວາມສ່ຽງທີ່ອາດເກີດຈາກຜະລິດຕະພັນດັ່ງກ່າວ ຢ່າງທັນການ;
5. ສໍາລັບຜະລິດຕະພັນ ທີ່ມີຄວາມສະຫຼັບສັບຊ້ອນ ທີ່ນໍາໃຊ້ລະບົບເຕັກໂນໂລຊີ ຕ້ອງມີແຜນຮອງຮັບພາວະວິກິດ (Contingency Plan);
6. ການກວດກາຄວາມສອດຄ່ອງ (Compliance) ແລະ ກວດສອບພາຍໃນ (Internal Audit) ຕໍ່ການບໍລິຫານຜະລິດຕະພັນ;

7. ເງື່ອນໄຂ, ໜ້າທີ່, ຄວາມຮັບຜິດຊອບ, ສິດ ແລະ ຂໍ້ຫ້າມ ສຳລັບຄະນະກຳມະການ, ໜ່ວຍງານ ແລະ ພະນັກງານ ທີ່ຈະຈັດຕັ້ງປະຕິບັດຂໍ້ 2 ຫາ 6 ຂ້າງເທິງ ຊຶ່ງຕ້ອງບໍ່ມີຜົນປະໂຫຍດທັບຊ້ອນ (Conflict of Interest).

### ມາດຕາ 18 ກົດລະບຽບສຳລັບການນຳໃຊ້ຜະລິດຕະພັນ

ກົດລະບຽບສຳລັບການນຳໃຊ້ຜະລິດຕະພັນ ແມ່ນເອກະສານກ່ຽວກັບຜະລິດຕະພັນ ທີ່ທະນາຄານຄຳສະເໜີໃຫ້ຜູ້ຊົມໃຊ້ສຶກສາກ່ອນການນຳໃຊ້ຜະລິດຕະພັນໃດໜຶ່ງ. ທະນາຄານຄຳ ຕ້ອງສ້າງກົດລະບຽບສຳລັບການນຳໃຊ້ຜະລິດຕະພັນແຕ່ລະປະເພດ ຫຼື ກຸ່ມຜະລິດຕະພັນທີ່ມີລັກສະນະຄ້າຍຄືກັນ ໃຫ້ມີເນື້ອໃນຊັດເຈນ, ຄົບຖ້ວນ ແລະ ເຂົ້າໃຈງ່າຍ ສຳລັບຜູ້ຊົມໃຊ້ ຊຶ່ງຕ້ອງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ສອດຄ່ອງກັບຄູ່ມືບໍລິຫານຜະລິດຕະພັນທີ່ກ່ຽວຂ້ອງ;
2. ຈຸດປະສົງຂອງການໃຫ້ບໍລິການຜະລິດຕະພັນ ແລະ ຂອບເຂດການໃຫ້ບໍລິການ;
3. ເງື່ອນໄຂຜູ້ຊົມໃຊ້;
4. ສິດ ແລະ ພັນທະຂອງຜູ້ຊົມໃຊ້;
5. ການກຳນົດລາຄາ ລວມທັງອັດຕາດອກເບ້ຍ ແລະ ຄ່າທຳນຽມ;
6. ຂັ້ນຕອນການສະເໜີຂໍນຳໃຊ້ຜະລິດຕະພັນ;
7. ສິດ ແລະ ພັນທະຂອງທະນາຄານຄຳ ເຊັ່ນ: ຂອບເຂດຄວາມຮັບຜິດຊອບຂອງທະນາຄານຄຳ, ການແກ້ໄຂຄຳສະເໜີ, ການປັບໃໝ, ການໂຈະ, ການຍົກເລີກການໃຫ້ບໍລິການ.

ໃນກໍລະນີມີການປັບປຸງຂໍ້ກຳນົດ ແລະ ເງື່ອນໄຂການນຳໃຊ້ຜະລິດຕະພັນ, ໃຫ້ທະນາຄານຄຳ ລາຍງານ ແລະ ສະໜອງເອກະສານກ່ຽວກັບການປັບປຸງດັ່ງກ່າວ ໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ເພື່ອພິຈາລະນາຮັບຮູ້.

### ມາດຕາ 19 ການກຳນົດລາຄາ ແລະ ຄ່າທຳນຽມຂອງຜະລິດຕະພັນ

ທະນາຄານຄຳ ຕ້ອງມີການກຳນົດລາຄາ ແລະ ຄ່າທຳນຽມ ຂອງຜະລິດຕະພັນ ບົນພື້ນຖານດັ່ງນີ້:

1. ຄຳນຶງເຖິງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຊົມໃຊ້;
2. ມີໂຄງສ້າງທີ່ຊັດເຈນ ລວມທັງວິທີການຄິດໄລ່ຕົ້ນທຶນ ແລະ ກຳໄລ ພ້ອມທັງການປະເມີນຄວາມອາດສາມາດໃນການຊຳລະຂອງຜູ້ຊົມໃຊ້;
3. ຮັບປະກັນວ່າ ພັນທະໃນສັນຍາ ຕ້ອງບໍ່ເກີນຄວາມສາມາດຊຳລະຂອງຜູ້ຊົມໃຊ້;
4. ສອດຄ່ອງກັບລະບຽບການທີ່ກ່ຽວຂ້ອງ ເຊັ່ນ: ຜະລິດຕະພັນທີ່ຕິດພັນກັບອັດຕາດອກເບ້ຍ, ຕ້ອງປະຕິບັດຕາມລະບຽບການກ່ຽວກັບການກຳນົດອັດຕາດອກເບ້ຍ ແລະ ຄ່າທຳນຽມ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກ ແຕ່ລະໄລຍະ.

ກົມຄຸ້ມຄອງທະນາຄານທຸລະກິດ ສາມາດອອກຄຳສັ່ງໃຫ້ຢຸດຕິ, ໃຫ້ສົ່ງຄືນການເກັບຄ່າທຳນຽມ ທີ່ເຫັນວ່າບໍ່ເປັນທຳຕໍ່ຜູ້ຊົມໃຊ້.

ທະນາຄານຄຳ ຕ້ອງແຈ້ງລາຄາ ແລະ ຄ່າທຳນຽມຂອງຜະລິດຕະພັນໃຫ້ແກ່ຜູ້ຊົມໃຊ້ຮັບຊາບ ກ່ອນການເຊັນສັນຍານຳໃຊ້ຜະລິດຕະພັນກັບທະນາຄານຄຳ ແລະ ສາມາດແຈ້ງຜ່ານຊ່ອງທາງຕ່າງໆເພີ່ມເຕີມ ຕາມຄວາມເໝາະສົມ.

### ມາດຕາ 20 ການປົກປ້ອງຜູ້ຊົມໃຊ້

ທະນາຄານຄຳ ຕ້ອງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ ຕາມທີ່ກຳນົດໄວ້ໃນດຳລັດວ່າດ້ວຍການປົກປ້ອງຜູ້ຊົມໃຊ້ການບໍລິການທາງດ້ານການເງິນ ສະບັບເລກທີ 225/ລບ, ລົງວັນທີ 06 ເມສາ 2020 ແລະ ລະບຽບການທີ່ກ່ຽວຂ້ອງກຳນົດ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 21 ຂໍ້ຫ້າມ**

ຫ້າມທະນາຄານຄໍາ ລວມທັງ ຜູ້ບໍລິຫານ ແລະ ພະນັກງານ ມີພຶດຕິກໍາ ດັ່ງນີ້:

1. ເຄື່ອນໄຫວ ແລະ ດໍາເນີນທຸລະກິດ ນອກເໜືອຈາກທຸລະກິດທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;
2. ຮຽກ ຫຼື ກໍານົດເງື່ອນໄຂ ທີ່ບໍ່ຖືກຕ້ອງຕາມກົດໝາຍ ໃຫ້ຜູ້ຊົມໃຊ້ປະຕິບັດ ໃນການຮັບການບໍລິການຂອງຕົນ ຫຼື ໃນກຸ່ມ;
3. ສະໜອງ ຫຼື ເປີດເຜີຍຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ;
4. ເປີດເຜີຍຂໍ້ມູນຂອງລູກຄ້າໂດຍບໍ່ໄດ້ຮັບອະນຸຍາດ;
5. ດໍາເນີນທຸລະກໍາໃນບັນຊີຂອງລູກຄ້າ ໂດຍບໍ່ສອດຄ່ອງກັບລະບຽບການ ຫຼື ບໍ່ໄດ້ຮັບອະນຸຍາດ;
6. ສ້າງອຸປະສັກກີດຂວາງ ການປະຕິບັດຂອງເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ ໃນການປະຕິບັດວຽກງານຕິດຕາມ, ກວດກາ ການດໍາເນີນທຸລະກິດຂອງທະນາຄານຄໍາ;
7. ສົ່ງມອບຄໍາປອມ, ບໍ່ມີຄຸນນະພາບ ແລະ ບໍ່ໄດ້ມາດຕະຖານ;
8. ປອມແປງເອກະສານ ແລະ ປົດບັງຂໍ້ມູນຄວາມຈິງ;
9. ພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກໍານົດ.

**ມາດຕາ 22 ມາດຕະການຕໍ່ການລະເມີດ**

ທະນາຄານຄໍາ ລວມທັງ ຜູ້ບໍລິຫານ ແລະ ພະນັກງານ ທີ່ລະເມີດກົດໝາຍວ່າດ້ວຍທະນາຄານທຸລະກິດ ແລະ ຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການຕາມທີ່ກໍານົດໄວ້ໃນຂໍ້ຕົກລົງວ່າດ້ວຍມາດຕະການຕໍ່ການລະເມີດຂອງທະນາຄານທຸລະກິດ ສະບັບເລກທີ 400/ທຫລ, ລົງວັນທີ 30 ພຶດສະພາ 2022 ຫຼື ສະບັບທີ່ມີການປັບປຸງ ຫຼື ປ່ຽນແປງ ແຕ່ລະໄລຍະ.

**ມາດຕາ 23 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ເປັນເຈົ້າການ ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ທະນາຄານຄໍາ ມີໜ້າທີ່ປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 24 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ຮັກສາການຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ. ລາວ ຜູ້ວ່າການ

ວັດທະນາ ດາລາລອຍ